

# 11 ເຮັດວຽກຮ່ວມກັນເພື່ອຊ່ວຍເດັກທີ່ຫູໜວກ

ຍັງມີຫລາຍວິທີ ທີ່ບັນດາຊຸມຊົນຕ່າງໆສາມາດເຮັດວຽກຮ່ວມກັນເພື່ອໃຫ້ເດັກທີ່ຫູໜວກມີຄວາມແຕກຕ່າງ ເພາະພວກເຂົາສາມາດເຮັດໃຫ້ບັນດາຊຸມຊົນເປັນສະຖານທີ່ ທີ່ດີກວ່າໃຫ້ແກ່ພວກເດັກທີ່ຫູໜວກດ້ວຍການຍົກສູງຈິດສຳນຶກໃນຄວາມຕ້ອງການ ແລະ ຄວາມສາມາດ ຂອງເດັກທີ່ຫູໜວກ ຫລື ເດັກທີ່ບໍ່ໄດ້ຍິນດີຄືເດັກທົ່ວໄປ. ບັນດາຊຸມຊົນຕ່າງໆສາມາດຊ່ວຍເຫລືອຄອບຄົວທີ່ມີເດັກຫູບໍ່ໄດ້ຍິນດີໄດ້ ແລະ ສາມາດອຳນວຍຄວາມສະດວກແກ່ເດັກທີ່ຫູໜວກໃຫ້ໄດ້ມີການສຶກສາຄືກັບເດັກອື່ນໄດ້.

## ສະພາບຊຸມຊົນຂອງທ່ານເດເປັນແນວໃດ?

ສິ່ງທີ່ຫລາຍຄົນນັບຖືວ່າແມ່ນຊຸມຊົນຂອງຕົນເອງທີ່ສຳຄັນແມ່ນລວມທັງເພື່ອນບ້ານ ໃກ້ຄຽງສະຖານທີ່ຢູ່ອາໄສ ແລະ ອື່ນໆ ແຕ່ນອກຈາກນີ້ ກໍຍັງມີຫລາຍປະເພດຊຸມຊົນນຳກັນ ເພາະ ຫລາຍກຸ່ມຄົນກໍສາມາດສະໜອງການອຸ້ມຊູແກ່ເດັກທີ່ຫູໜວກ ແລະ ຄອບຄົວຂອງພວກເຂົາໄດ້ ເນື່ອງຈາກວ່າ ຄອບຄົວທີ່ມີລູກເປັນຄົນຫູໜວກແມ່ນສັງກັດຢູ່ກັບຊຸມຊົນຫລາຍແບບນີ້ເອງໃນເວລາດຽວກັນ.



## ບັນດາເດັກນ້ອຍທີ່ຮຽນ ແລະ ຫຼິ້ນນຳກັນກໍ່ໃຫ້ເກີດເປັນຊຸມຊົນອີກ ແບບໜຶ່ງຂຶ້ນມາ

ຕາມທຳມະຊາດແລ້ວ ບັນດາເດັກແມ່ນຢູ່ນຳສັງຄົມຮ່ວມກັນ ແຕ່ບັນດາເດັກເຫຼົ່ານີ້ ມີຄວາມຕ້ອງການການໃຫ້ກຳລັງໃຈ ທີ່ຢາກໃຫ້ເດັກຄົນອື່ນຈັດພວກເຂົາເຂົ້າກັບສັງຄົມເຖິງແມ່ນວ່າພວກເຂົາຈະມີຄວາມແຕກຕ່າງຈາກເດັກທົ່ວໄປ ບໍ່ວ່າພວກເຂົາຈະເປັນເດັກຫູໜວກທີ່ມີຈຸດພິເສດທີ່ແຕກຕ່າງຄົນອື່ນກໍ່ຕາມ ດັ່ງນັ້ນພວກຜູ້ໃຫຍ່ ແລະ ເດັກທີ່ອາຍຸແກ່ກວ່າສາມາດ ຊ່ວຍໃຫ້ເດັກເຫຼົ່ານີ້ໄດ້ຮຽນຮູ້ການນັບຖືເຊິ່ງກັນ ແລະ ກັນ ແລະ ສາມາດພັດທະນາຄຸນນະພາບຕົນເອງໃຫ້ດີດັ່ງຄວາມອົດທົນ, ຄວາມຍຸຕິທຳ ແລະການດູແລເບິ່ງແຍງຊຶ່ງກັນ ແລະ ກັນ.

## ບັນດາຄົນຫູໜວກປະກອບເປັນຊຸມຊົນ

ໃນບາງຄັ້ງບັນດາຄົນຫູໜວກຮູ້ສຶກວ່າບໍ່ມີໃຜສົນໃຈ



ໃນສະຫວັດດີພາບຂອງພວກເຂົາເພາະໃນຫຼາຍຊຸມຊົນນັ້ນ ພວກທີ່ຫູໜວກ ຫຼື ຫູບໍ່ໄດ້ຍິນດີຖືກປະປ່ອຍຈາກຄົນໃນຄອບຄົວຈາກພີ່ນ້ອງຈາກເພື່ອນບ້ານໃກ້ຄຽງ ແລະ ຈາກບັນດາຄົນອື່ນໆໃນສັງຄົມ ໂດຍສະເພາະແມ່ນຜູ້ ທີ່ບໍ່ສາມາດສື່ສຳພັນກັບພວກເຂົາໄດ້. ບາງຄັ້ງພວກເຂົາກໍ່ຖືກຫົວເຍາະເຍີ້ຍ ແລະ ມີການຢອກກວນພວກເຂົາດ້ວຍເຫດນີ້ຜູ້ທີ່ເປັນພໍ່ແມ່ພວກເຂົາກໍ່ລຳບາກໃຈເມື່ອເຫັນລູກໆຂອງພວກເຂົາຖືກເຍາະເຍີ້ຍຈາກຄົນອື່ນ. ໂດຍທົ່ວໄປແລ້ວພວກທີ່ຫູໜວກມັກມີ

*ບ່ອນໃດກໍ່ຕາມຈະມີຄົນຫູໜວກ 2 ຄົນ ຫຼື ຫຼາຍກວ່ານັ້ນຢູ່ນຳກັນ, ມີຊຸມຊົນໜຶ່ງສ້າງປະສົບການທຳມະດາຂອງການເປັນຫູໜວກ.*




ບັນຫາຄ້າຍໆກັນ ແລະ ພວກເຂົາມີໂອກາດນ້ອຍທີ່ສຸດໃນສັງຄົມທົ່ວໄປ.

ບັນດາພວກຫູໜວກຈະຮູ້ສຶກໃກ້ຊິດກັບບັນດາຜູ້ທີ່ຫູໜວກນຳກັນ ເພາະພວກເຂົາປະເຊີນກັບບັນຫາທີ່ຄ້າຍຄືກັນ ແລະ ພວກເຂົາກໍ່ມີສ່ວນປະກອບທີ່ຄືກັນໃນການສື່ສຳພັນກັນໄດ້ ດັ່ງພວກເຂົາຈະໃຊ້ພາສາສັນຍານ (ພາສາມື). ບໍ່ວ່າພວກເຂົາຈະຢູ່ໃກ້ກັນ ຫຼື ໄປມາຫາສູ່ກັນ ພວກເຂົາສ້າງຄວາມສຳຄັນຊຶ່ງກັນ ແລະ ກັນໄດ້ດີກວ່າ ເພາະພວກເຂົາຈະເຫັນພວກຫູໜວກນຳກັນເປັນເພື່ອນມິດທີ່ໃຫ້ຄວາມສຸກ ແລະໃຫ້ການປຶກສາຫາລືກັນໄດ້. ເມື່ອໃດພວກເຂົາມາພົບກັນພວກເຂົາກໍ່ກາຍເປັນກຸ່ມກ້ອນຄົນໃນສັງຄົມທີ່ເຂັ້ມແຂງຂຶ້ນມາ. ການກໍ່ຕັ້ງກຸ່ມຄົນແບບນີ້ຈະມີໄດ້ໃນເມື່ອມີໂຮງຮຽນສຳລັບຄົນຫູໜວກ ເພາະພວກເດັກຫູໜວກສຶກສາຮ່ຳຮຽນ ແລະ ຈະເຕີບໃຫຍ່ມານຳກັນ. ພວກເຂົາອາດມາລວມກັນໃນສະໂມສອນ, ເຮັດວຽກແບບລວມໝູ່ ຫຼື ເຮັດວຽກກັບອົງການຈັດຕັ້ງທາງສາສະໜາ.

ພວກຫູໜວກທີ່ໃຫຍ່ແລ້ວ ສາມາດຊ່ວຍເຫຼືອຄອບຄົວທີ່ລ້ຽງລູກເປັນເດັກຫູໜວກ ໄດ້ຫຼາຍແນວ ເພາະພວກເຂົາສາມາດຮູ້ເຖິງຄວາມຕ້ອງການຂອງເດັກ ແລະ ຮູ້ເຖິງສິ່ງທ້າທາຍຕ່າງໆທີ່ຄອບຄົວມີລູກເປັນຄົນຫູໜວກໄດ້ຮັບ.

# ຄົນຫູດີທີ່ຍອມຮັບຄົນຫູໜວກສາມາດເຮັດໃຫ້ຊຸມຊົນເຂົ້າກັນໄດ້

ບັນດາຄົນຫູດີຫຼາຍຄົນທີ່ຮັບຮູ້ເຖິງຄຸນຄ່າຂອງມິດຕະພາບກັບຄົນຫູໜວກ ສາມາດເຮັດໃຫ້ສັງຄົມມີຄວາມໝາຍ ເພາະພວກເຂົາອາດມີເພື່ອນ ຫຼື ໄດ້ເຮັດວຽກກັບເພື່ອນທີ່ເປັນຄົນຫູໜວກ ຫຼື ອາດມີສະມາຊິກຄອບຄົວທີ່ມີລູກເປັນຄົນຫູບໍ່ດີ. ຜູ້ທີ່ມີຄວາມຈິງໃຈພົວພັນ ກັບຄົນຫູໜວກໂດຍເຈດຕະນາດີ ສາມາດສ້າງສະພານແຫ່ງຄວາມເຂົ້າໃຈກັບຄົນຫູໜວກໄດ້ ເພາະຖ້າຄົນຫູດີຫາກສາມາດໃຊ້ພາສາມືໄດ້ ພວກເຂົາກໍ່ສາມາດຊ່ວຍຄົນຫູໜວກ ແລະ ສາມາດ ຊ່ວຍເດັກທີ່ຫູໜວກໄດ້ບຸກບືນ ແລະ ຕໍ່ສູ້ໄດ້.

## ໂຈເຊັບ ແລະ ກອງຮ້ອງເພງໝູ່

ໂຈເຊັບເປັນຊາຍຫນຸ່ມຜູ້ຫນຶ່ງຈາກໄຮຕີ ຊຶ່ງສາມາດໄດ້ຍິນ ແລະ ຮຽນພາສາມື ຈາກໂຮງຮຽນທີ່ຢູ່ໃກ້ບ້ານຂອງລາວ. ໂຈເຊັບມີເພື່ອນທີ່ເປັນຄົນຫູໜວກໃນເມືອງຂອງລາວ ແລະ ພວກເຂົາໄດ້ຊຸກຍູ້ໃຫ້ໂຈເຊັບອາສາສະຫມັກໄປຊ່ວຍທາງໂບດ ທີ່ຈັດຕັ້ງການສວດມົນໃຫ້ແກ່ຄົນຫູໜວກ. ດັ່ງນັ້ນ, ໂຈເຊັບຈຶ່ງພະຍາຍາມຮຽນແປບົດສວດມົນຈາກພາສາເວົ້າມາເປັນພາສາມື ເມື່ອລາວໄດ້ມີສ່ວນກັບທາງໂບດຫຼາຍຂຶ້ນ ລາວກໍ່ໄດ້ສອນຊາວຫນຸ່ມຫູໜວກໃຫ້ໃຊ້ພາສາມື ແລະ ໃຫ້ຮ້ອງເພງອອກມາເປັນພາສາເວົ້າທີ່ໃຊ້ໃນໂບດ. ຈາກນັ້ນ ມາກອງຮ້ອງເພງຄົນຫູໜວກ ກໍ່ໄດ້ຮ້ອງເພງ ອອກມາເປັນສຽງດັງ ແລະ ໃຊ້ພາສາມືໄປພ້ອມກັນ ໃນຂະນະຮ້ອງເພງ.



ດຽວນີ້ ໂຈເຊັບ ແລະ ກອງຮ້ອງເພງຄົນ ຫູໜວກ ໄດ້ຂີ່ລົດອອກໄປນອກເມືອງໃນເຂດໄຮຕີ ແລະ ບ່ອນນີ້ເອງພວກເຂົາໄດ້ຮ້ອງເພງ ຮ່ວມກັນໃນໂບດຊົນນະບົດຫລາຍແຫ່ງ ຈາກນັ້ນມີຄົນຫລາຍຄົນມາຫາໂຈເຊັບ ແລະ ຖາມເຖິງຄວາມເປັນມາຂອງກອງຮ້ອງເພງຄົນຫູໜວກ ແລ້ວພວກເຂົາກໍ່ໄດ້ເລົ່າເລື່ອງເດັກ ຫູໜວກພາຍໃນຄອບຄົວໃຫ້ຟັງ.

ໂຈເຊັບໄດ້ຖືໂອກາດນີ້ເວົ້າເຖິງໂຄງການຊ່ວຍຄົນຫູໜວກ ໃນເມືອງແຫ່ງຫນຶ່ງ ແລະ ລາວກໍ່ໄດ້ເວົ້າເຖິງໂຮງຮຽນກິນນອນ ສຳລັບຄົນຫູໜວກສຳລັບເດັກອາຍຸແກ່ໃນເມືອງ ຂອງລາວໃຫ້ຟັງ.

ການທີ່ໂຈເຊັບນຳເອົາເດັກຫນຸ່ມຫູໜວກອອກສູ່ບັນດາໂບດໃນເຂດຊົນນະບົດເທື່ອນີ້ ເຂົາສາມາດເຊື່ອມສຳພັນໃຫ້ຄົນຫູດີ ແລະ ຄົນຫູໜວກເຂົ້າຫາກັນໄດ້ຫລາຍຂຶ້ນ.

# ສ້າງຊຸມຊົນໃຫ້ເປັນບ່ອນທີ່ເປັນຕາຢູ່ສຳລັບເດັກຫູໜວກ

## ການຍົກສູງຈິດສຳນຶກ

ການປະພຶດຂອງຜູ້ໃຫຍ່ ແລະ ເດັກອາຍຸຫລາຍຕໍ່ກັບເດັກຫູໜວກມີຜົນກະທົບສູງຕໍ່ກັບ ສັງຄົມ ຕົວຢ່າງ ຖ້າວ່າຜູ້ໃຫຍ່ດຶງເອົາເດັກຫູໜວກເຂົ້າປະກອບສ່ວນໃນກິດຈະກຳຕ່າງໆ ຫລື ຜູ້ໃຫຍ່ເມີນເສີຍ ແລະ ບໍ່ເອົາໃຈໃສ່ຕໍ່ກັບເດັກຫູໜວກ ເມື່ອຄົນອື່ນເຫັນກໍມັກນຳເອົາມາເປັນແບບຢ່າງ. ນີ້ແມ່ນເລື່ອງທີ່ຜູ້ອຳນວຍການໃນປະເທດມົງໂກລີ ທີ່ນຳໃຊ້ຕຳແໜ່ງຂອງລາວໃນການເອົາໃຈໃສ່ ຕໍ່ກັບເດັກຫູໜວກໃນໂຮງຮຽນຂອງເພິ່ນ.

## ໂຮງຮຽນທີ່ເຂົ້າໃຈເດັກຫູໜວກ

ໃນເມືອງແຫ່ງໜຶ່ງທີ່ປະເທດມົງໂກລີໄດ້ມີຫຼາຍຄອບຄົວທີ່ຊ່ວຍກັນຈັດຕັ້ງໂຮງຮຽນສຳລັບ ເດັກນ້ອຍທີ່ຫູໜວກໃນທ້ອງຖິ່ນຂອງພວກເຂົາ. ພາຍຫຼັງທີ່ມີຂ່າວວ່າ ມີການເຢາະເຢີ້ຍ ແລະ ດູຖູກເດັກນ້ອຍຫູໜວກຫຼາຍກໍລະນີ ທາງຜູ້ອຳນວຍການໂຮງຮຽນໄດ້ຮ້ອງໃຫ້ນັກຮຽນ ມາປະຊຸມ ແລະ ອະທິບາຍວ່າ ການປະພຶດແບບນັ້ນບໍ່ຖືກຕ້ອງ ແລະ ບອກໃຫ້ພວກເຂົາຮູ້ວ່າ ເດັກນ້ອຍທຸກຄົນພາຍໃນໂຮງຮຽນຄວນຮັກແພງກັນ.

ພາຍຫຼັງທີ່ຜູ້ອຳນວຍການເນັ້ນໜັກໃຫ້ເອົາໃຈໃສ່ເດັກນ້ອຍຫູໜວກ ການປະພຶດຂອງຄົນທັງຫຼາຍກໍ່ມີການປ່ຽນແປງໄປທາງດີ. ເມື່ອ ການເວລາຜ່ານໄປ ບັນດາຄູສອນ, ພໍ່ແມ່ນັກຮຽນ ແລະ ນັກຮຽນດ້ວຍກັນ ກໍ່ຮູ້ສຶກພູມໃຈກ່ຽວກັບຫ້ອງຮຽນ ສຳລັບ ເດັກຫູໜວກແລ້ວ ພວກເຂົາກໍ່ເຂົ້າມາມີສ່ວນຮ່ວມໃນການຊ່ວຍເຫຼືອກັນ. ມາຮອດຕອນນີ້ ເມື່ອໃດນັກຮຽນຫູດີພົບກັບນັກຮຽນຫູໜວກນອກຫ້ອງຮຽນ ພວກເຂົາກໍ່ຮັກແພງກັນ. ນອກນີ້ ນັກຮຽນຫູດີ ກໍ່ໄປຢາມຫ້ອງຮຽນສຳລັບເພື່ອນຫູໜວກ ແລະ ນັກຮຽນໃຫຍ່ກໍ່ໄດ້ສອນວິທີເຕັ້ນລຳໃຫ້ກັບເດັກນ້ອຍຫູໜວກ. ກ່ຽວກັບການເຕັ້ນລຳແບບປະເພນີບູຮານທີ່ມີອາລິຍະບົດທີ່ສັບສົນກໍ່ເຕັ້ນໄດ້.




## ເຮັດໃຫ້ຄົນອື່ນມາພົວພັນກັບລູກຂອງທ່ານ

ພວກຜູ້ໃຫຍ່ ແລະ ເດັກຫູດີໃນຊຸມຊົນສາມາດຊ່ວຍເດັກຫູໜວກດ້ວຍການເຮັດວຽກຮ່ວມກັນ ພວກເຂົາຄວນເອົາໃຈໃສ່ເດັກຫູໜວກຄືກັບເດັກຫູດີທົ່ວໆໄປບໍ່ວ່າຈະແມ່ນທາງດ້ານການນັບຖື ຫຼື ສະແດງຄວາມເອື້ອອາລີຕໍ່ກັນກໍຕາມ. ໃນເມື່ອຄົນໃນສັງຄົມພົວພັນກັບເດັກຫູໜວກຈະເຫັນວ່າພວກເຂົາບໍ່ມີຫຍັງທີ່ແຕກຕ່າງໄປຈາກບັນດາເດັກຫູດີຕ່າງໆປານໃດ.

ຊຸກຍູ້ໃຫ້ຄົນມາເວົ້າລົມພົວພັນກັບລູກຂອງທ່ານ ແລະ ສະເໜີຊື່ໃຫ້ຄົນອື່ນຮູ້ ແລະ ສອນໃຫ້ເຂົາ ຮູ້ໃນການທັກທາຍ ແລະ ສອນໃຫ້ຄົນອື່ນທັກທາຍກັບເຂົາ ສອນໃຫ້ເຂົາເວົ້າອອກມາເປັນສຽງກັບການໃຊ້ພາສາມື ໂດຍເວົ້າຊື່ໃຫ້ອອກສຽງອອກມາຄືກັບຄົນທຳມະດາ.

ຄົນໃນສັງຄົມອາດຮູ້ສຶກສະບາຍໃຈ ຖ້າ ທ່ານຫາກບອກເຂົາວິທີປະພຶດຕໍ່ກັນ ດ້ວຍການ ໃຊ້ພາສາມື ແລະ ການໃຊ້ມືສັນຍານ. ວິທີທີ່ດີທີ່ສຸດ ຄືສອນໃຫ້ຄົນອື່ນໃຊ້ສາຍຕາໃຫ້ຢູ່ໃນລະດັບດຽວ ກັບລູກຂອງທ່ານ ໃນເວລາເວົ້າ ຫລື ໃຊ້ພາສາມື. ຄົນທັງຫລາຍສາມາດໃຊ້ການສະແດງອອກທາງໃບໜ້າໃນເວລາພົວພັນກັບເດັກຫູໜວກຄືກັບການ ສະແດງອອກກັບເດັກຫູດີທົ່ວໄປ.




ບັນດາຄອບຄົວຂອງເດັກຫູໜວກ ສາມາດຈັດຕັ້ງໂຄງການສຳລັບໃນແຖວບ້ານໃກ້ຄຽງ ເພື່ອຊ່ວຍໃຫ້ພວກເຂົາມີຄວາມເຂົ້າໃຈຄວາມແຕກຕ່າງການນັບຖືເຊິ່ງກັນ ແລະ ມີຈິດສຳນຶກຕໍ່ກັບຫູໜວກ ແລະ ການໄດ້ຍິນ. ພວກເຂົາສາມາດຊ່ວຍ ບັນດາເພື່ອນຝູງ ແລະ ກຸ່ມຄົນໃນຊຸມຊົນໃຫ້ມາຮັກແພງຄົນຫູໜວກ ແລະ ໃຫ້ຮັບຮູ້ໃນຄວາມ ແຕກຕ່າງຂອງພວກເຂົາດ້ວຍວິທີການອື່ນໆ.

ຄົນເຮົາສາມາດເຂົ້າໃຈເດັກທີ່ບໍ່ໄດ້ຍິນດີ ຖ້າພວກເຂົາສຳນຶກເຖິງຄວາມຮູ້ສຶກຂອງຕົນເອງເມື່ອຢູ່ໃນສະພາບແບບດຽວກັນ. ມີຫລາຍວິທີການທີ່ພາໃຫ້ຊວນຫົວ ເພາະເກມເຫລົ່ານີ້ ສາມາດນຳໃຊ້ໃນສະຖານທີ່ສາທາລະນະ, ໃນວັດ, ໃນບ່ອນສາສະໜາ, ຄຣີນິກ, ໂຮງຮຽນ ແລະໃນກຸ່ມຄົນໃນສັງຄົມ. ພວກທ່ານສາມາດໃຊ້ເກມເຫລົ່ານີ້ໃນເວລາປຸກລະດົມຈິດສຳນຶກ ຫລື ໃນກອງປະຊຸມພໍ່ແມ່ນັກຮຽນ.

## ▶ ຈະເຮັດວິທີໃດທີ່ຈະເຮັດໃຫ້ຄົນຫູດີເຂົ້າໃຈຄວາມຮູ້ສຶກຂອງຄົນທີ່ ຫູໜວກ ຫລື ຫູບໍ່ໄດ້ຍິນດີ

### ເກມ: ເຈົ້າວ່າແນວໃດ?

ໃຫ້ຄົນຜູ້ໜຶ່ງອັດຫູໃນຂະນະທີ່ອີກຜູ້ໜຶ່ງກຳລັງເລົ່ານິທານຊວນຫົວໃຫ້ກຸ່ມຄົນຟັງຢູ່ ຫຼື ຈະໃຫ້ມີໃຜຜູ້ໜຶ່ງປ່ຽນຜຽນກັນນັ່ງໄກໆ ອອກໄປຈົນບໍ່ໄດ້ຍິນກ່ຽວກັບນິທານເລີຍ. ຈາກນັ້ນ ກໍໃຫ້ຖາມຄຳຖາມ ກ່ຽວກັບເລື່ອງທີ່ເລົ່າມາ ນັບທັງຖາມຜູ້ທີ່ເອົາມືອັດຫູ ຫລື ຜູ້ທີ່ນັ່ງໄກ ອອກໄປ.



ໃຫ້ຖາມຄົນຜູ້ນີ້ວ່າ ຮູ້ສຶກແນວໃດໃນການທີ່ບໍ່ໄດ້ຍິນນິທານ ເຕັມຫູຄືຄົນອື່ນ.

ຈາກນັ້ນ ທຸກຄົນກໍອອກຄຳເຫັນກ່ຽວກັບວິທີໃດທີ່ ຄວນຕິດຕໍ່ພົວພັນໃຫ້ດີຂຶ້ນ ກັບເດັກ ທີ່ມີບັນຫາ ກ່ຽວກັບການຟັງ.




## ► ວິທີຊ່ວຍເດັກໆໃຫ້ຕິດຕໍ່ພົວພັນກັນໂດຍບໍ່ໃຊ້ສຽງ

ເດັກຜູ້ໃດທີ່ມີບັນຫາໃນການຟັງມັກມີບັນຫາໃນ ການປາກ ເພາະສຽງຂອງພວກເຂົາອາດ ມີຄວາມ ແປກໆ ສຳລັບຄົນຟັງທົ່ວໆໄປ ເພາະຖ້າບໍ່ໄດ້ຍິນແລ້ວ ມັນກໍເປັນການຍາກທີ່ຈະປາກ ອອກມາໃຫ້ຄືກັບຄົນຫູ ດີ. ດັ່ງນັ້ນ ຄົນຫູໜວກຈຶ່ງບໍ່ມັກປາກ ແລະ ໃຊ້ພາສາ ໃບ້ແທນ. ຄົນທີ່ມີ ບັນຫາໃນການຟັງມັກເປັນຄົນຂີ້ ອາຍ ແລະ ມັກຕິດຕໍ່ພົວພັນກັບຄົນທີ່ພວກເຂົາຮູ້ດີ ເທົ່ານັ້ນ.

### ເກມ: ການເວົ້າບໍ່ອອກສຽງ

ເກມເລື່ອງນີ້ຈະຊ່ວຍໃຫ້ເດັກ ເຂົ້າໃຈກ່ຽວກັບຄວາມ ຫຍຸ້ງຍາກສຳລັບ ຄົນທີ່ບໍ່ສາມາດປາກ ຫລື ຜູ້ທີ່ປາກ ບໍ່ ເກັ່ງ ໃນການພົວພັນກັນ. ໃຫ້ແຕ່ລະຄົນປ່ຽນຜຽນ ກັນໃນການເວົ້າຕໍ່ກັບໝູ່ໃນກຸ່ມໂດຍບໍ່ໃຫ້ໃຊ້ສຽງ. ໃຫ້ ເລີ່ມຕົ້ນດ້ວຍ ແນວຄວາມຄິດແບບງ່າຍໆກ່ອນດັ່ງ:

ຂ້ອຍຮູ້ສຶກຢາກນອນ ຫລື ເອົາ ໝາກບານມາໃຫ້ ຂ້ອຍແດ່. ຈາກນັ້ນ ກໍໃຊ້ບັນຫາຍາກຂຶ້ນດັ່ງ: ຂ້ອຍ



ຫລິງ ທາງ ແລະ ບໍ່ສາມາດກັບເມືອເຮືອນໄດ້ ຫລື ຂ້ອຍຝັນຮ້າຍ.

ຫລັງຈາກນັ້ນ ເຈົ້າສາມາດເວົ້າກ່ຽວກັບ:

- ມັນຍາກບໍທີ່ຈະອະທິບາຍສິ່ງໃດສິ່ງຫນຶ່ງໂດຍບໍ່ເວົ້າເປັນສຽງອອກມາ?
- ທ່ານຈະຮູ້ສຶກແນວໃດເມື່ອຄົນອື່ນບໍ່ສາມາດເຂົ້າໃຈທ່ານໄດ້?
- ບັນດາເດັກຫູດີເຮັດແນວໃດຈຶ່ງຈະພົວພັນກັບເດັກທີ່ຫູໜວກ? ມີວິທີອື່ນບໍ່ທີ່ພວກເຂົາ ຈະຊ່ວຍໄດ້?
- ມີວິທີອື່ນໃດອີກທີ່ເຈົ້າຈະພົວພັນກັບເດັກທີ່ບໍ່ສາມາດປາກໄດ້?ຈາກນັ້ນ ເຈົ້າກໍ່ສ້າງປ້າຍສັນຍານສຳລັບແນວຄວາມຄິດທີ່ເຈົ້າຄິດອອກມາ ແລະ ທົດລອງເບິ່ງວ່າມີຄວາມຍາກງ່າຍ ປານໃດທີ່ຈະສື່ສຳພັນດ້ວຍປ້າຍສັນຍານພວກນີ້ໄດ້?

ນີ້ແມ່ນໂອກາດດີທີ່ຈະບອກເດັກຫູໜວກກ່ຽວກັບສັນຍານພາສາ ຫລື ເຮັດວິທີໃດທີ່ຄອບຄົວພວກເຂົາຈະສ້າງສັນຍານເຫລົ່ານີ້ ເພື່ອຊ່ວຍສື່ສານເຊິ່ງກັນ ແລະ ກັນ.

## ການໃຫ້ບໍລິການເດັກຫູໜວກ ແລະ ຄອບຄົວຂອງພວກເຂົາ

ຄົນເຮົາທຸກຄົນລ້ວນແຕ່ຕ້ອງການ ການບໍລິການພື້ນຖານດັ່ງ: ນ້ຳ, ໄຟຟ້າ, ພາຫະນະ, ການສຶກສາ ແລະ ການເບິ່ງແຍງສຸຂະພາບ ເຊິ່ງມັນມີຄວາມຈຳເປັນທີ່ຈະນຳໃຊ້ຊັບພະຍາກອນ ຂອງຊຸມຊົນທັງຫມົດເພື່ອສະຫນອງການບໍລິການເຫລົ່ານີ້ໄດ້ ແລະ ພວກເດັກຫູໜວກ ແລະ ຄອບຄົວຂອງພວກເຂົາ ກໍຕ້ອງການແບບດຽວກັນນີ້ຄືກັນ. ດັ່ງນັ້ນຄົນໃນສັງຄົມ ເຊິ່ງມີທັງຄວາມຮູ້ ຊັບພະຍາກອນ ແລະ ທັກສະ ທີ່ສາມາດແບ່ງປັນໃຫ້ກັບຄົນຫູໜວກ ແລະ ຄອບຄົວພວກເຂົາໄດ້. ຖ້າມີການເຮັດວຽກຮ່ວມກັນບໍ່ວ່າກຸ່ມຄອບຄົວ ຫລື ຊຸມຊົນທັງຊຸມຊົນ ສາມາດຈັດຕັ້ງຄວາມພະຍາຍາມຕໍ່ກັບສິ່ງນີ້:

- ຮຽນຮູ້ວິທີການກວດສອບການໄດ້ຍິນ ຂອງລູກທີ່ຍັງເດັກໃຫ້ໄດ້.
- ຊ່ວຍເຫລືອພະນັກງານສາທາລະນະສຸກໃຫ້ຮຽນຮູ້, ຮັບຮູ້ ແລະສາມາດປິ່ນປົວຫູທີ່ຕິດ ເຊື້ອ ເພື່ອປ້ອງກັນການເປັນຫູໜວກ.
- ຊອກຫາບ່ອນຄອບຄົວທີ່ມີລູກຫູໜວກໄດ້ພົບກັນ.
- ຈັດຕັ້ງຫ້ອງຮຽນທີ່ໃຊ້ສຽງ ແລະ ສັນຍານມື.
- ຊ່ວຍໃຫ້ຄົນທີ່ໄດ້ຍິນດີຮຽນວິທີປາກ ເພື່ອໃຫ້ເດັກທີ່ບໍ່ໄດ້ຍິນດີສາມາດເຂົ້າໃຈນຳໄດ້.
- ແປພາສາສັນຍານ ອອກມາເປັນພາສາສຽງ ແລະ ນຳໃຊ້ໃນໂຮງຮຽນ ຫລື ກຸ່ມຫລິ້ນເກມທີ່ປະເທດອິນເດຍມີກຸ່ມຂອງພໍ່ແມ່ເດັກໄດ້ເຮັດວຽກຮ່ວມກັນໃນການນຳເອົາການບໍລິການຊ່ວຍ ການຟັງມາສູ່ເມືອງຂອງພວກເຂົາ ເພື່ອພວກເດັກໄດ້ຮັບການຊ່ວຍເຫຼືອໃນການໃຊ້ເຄື່ອງຊ່ວຍຟັງຈາກພະນັກງານສາທາລະນະສຸກປັບແປງ ແລະ ຮັກສາເຄື່ອງຊ່ວຍຟັງໃຫ້ກັບພວກເຂົາ.



*ປ້າຍປອດໄພແບບນີ້ ຈະເຮັດໃຫ້ຖະໜົນມີ ຄວາມປອດໄພກວ່າ.*

ສະມາຄົມຂອງກຸ່ມພໍ່ແມ່ ຫລື ບ້ານ ສາມາດເຊີນໃຫ້ອົງກອນ ຫລື ບຸກຄົນຈາກພາຍນອກຊຸມຊົນ ມາຢັ້ງມຢາມບ້ານພວກເຂົາ ເພື່ອຈະໄດ້ເລີ່ມຕົ້ນການໃຫ້ບໍລິການແບບໃຫມ່, ໃຫ້ການ ຝຶກອົບຮົມ ຫລື ນຳພາການສົນທະນາແກ້ໄຂບັນຫາ ນອກນີ້ ຊຸມຊົນສາມາດເກັບເງິນເພື່ອສົ່ງບຸກຄົນໃດຫນຶ່ງໄປຮັບການຝຶກອົບຮົມເມື່ອສຳເລັດການຝຶກອົບຮົມແລ້ວ ກໍກັບມາຝຶກອົບຮົມຄົນອື່ນຕໍ່ໄປ.

## ສ້າງຕັ້ງກຸ່ມຄົນເພື່ອຊ່ວຍສະຫນັບສະຫນູນ

ບັນດາຄອບຄົວຂອງເດັກທີ່ຫູຫນວກເປັນບໍ່ເກີດທີ່ສຳຄັນ ໃນການຊ່ວຍເຫລືອເຊິ່ງກັນ ແລະ ກັນ. ຖ້າມີການຈັດຕັ້ງກອງປະຊຸມເປັນປະຈຳ ພວກເຂົາກໍສາມາດ ຊ່ວຍ"ແກ້ໄຂບັນຫາທີ່ພວກເຂົາກຳລັງປະເຊີນຢູ່ ແລະ ພວກເຂົາກໍ່ສາມາດແບ່ງປັນແນວຄວາມຄິດດີໆ ແລະ ສາມາດສ້າງໂອກາດໃຫມ່ໆ ໃຫ້ແກ່ລູກໆຂອງພວກເຂົາໄດ້. ຖ້າສາມາດຕອບສະຫນອງຄວາມຕ້ອງການ ຂອງລູກໆ ໄດ້ແບບນີ້ ກໍສາມາດຜ່ານຜ່າອຸປະສັກ ແລະ ສິ່ງທ້າທາຍໄດ້.

ຊຸມຊົນສາມາດສ້າງໂອກາດໃຫ້ເກີດຂຶ້ນມາໄດ້ໂດຍການສະຫນອງສະຖານທີ່ປະຊຸມເຊັ່ນ ໃນວັດ ດ້ວຍການເປີດເຜີຍໃຫ້ກຸ່ມການສະຫນູນກຸ່ມອື່ນ ຮູ້ກ່ຽວກັບກອງປະຊຸມ ໃນຄັ້ງຜ່ານມາ ເພື່ອວ່າບັນດາຄອບຄົວອື່ນໆສາມາດມາມີສ່ວນຮ່ວມນຳໄດ້.

### ອົງການຈັດຕັ້ງຊຸມຊົນອື່ນກໍ່ສາມາດອູ້ມຊູໄດ້

ອົງການຈັດຕັ້ງພື້ນຖານດັ່ງ: ອົງການຈັດຕັ້ງແມ່ຍິງ, ອົງການຈັດຕັ້ງພໍ່ແມ່ຜູ້ປົກຄອງ, ອົງການ ຈັດຕັ້ງຊາວນາ ຫລື ກຸ່ມສິນເຊື່ອ ຫລື ກຸ່ມສ້າງລາຍຮັບ ກໍສາມາດສະຫນອງການອູ້ມຊູພໍ່ແມ່ ຂອງເດັກ ທີ່ມີບັນຫາຫຍຸ້ງຍາກໃນການຟັງໄດ້. ຕົວຢ່າງ: ຄອບຄົວທີ່ມີລູກມີບັນຫາໃນການຟັງ ອາດຕ້ອງການເວລາເພີ່ມພິເສດໃນການສິດສອນ ແລະ ດູແລເບິ່ງແຍງລູກພວກເຂົາ ເຊິ່ງມັນກໍມີ ຄວາມຫຍຸ້ງຍາກໃນການຊອກວຽກເຮັດນອກຄອບຄົວ. ດັ່ງນັ້ນ ອົງການຈັດຕັ້ງທ້ອງຖິ່ນສາມາດຊ່ວຍເຫລືອ ພໍ່ແມ່ຜູ້ປົກຄອງສ້າງລາຍຮັບເພີ່ມ ຕົວຢ່າງກຸ່ມພໍ່ແມ່ ແລະ ຊ່ວຍຊອກເຄື່ອງຊ່ວຍຟັງ, ຊ່ວຍຊອກຫາຄູສອນພາສາສັນຍານ ແລະ ສ້າງໂອກາດການສຶກສາກ່ອນໄວຮຽນດ້ວຍການຖົມຊຸມໃນຄ່າໃຊ້ຈ່າຍ ຄ່າຮຽນ ແລະ ຊ່ວຍເຫລືອໃນຫລາຍວິທີອື່ນໆອີກ.



# ເຮັດໃຫ້ເດັກ ແລະ ຜູ້ໃຫຍ່ຫູໜວກພົບກັນ

ເມື່ອທາງຊຸມຊົນມີຄວາມພະຍາຍາມໃນການອູ້ມຊູ ແລະ ສ້າງໂອກາດໃນການເຮັດໃຫ້ ເດັກຫູໜວກ ຫລື ເດັກທີ່ມີບັນຫາໃນການຟັງມາພົວພັນກັນ ພວກເຂົາກໍ່ຈະປະກອບເປັນກຸ່ມຊົນ ໜຶ່ງ ທີ່ຈະພັດທະນາພາສາ ແລະ ສ້າງທັກສະໃນການຕິດຕໍ່ພົວພັນຂຶ້ນມາໄດ້. ໃນເມືອງໜຶ່ງທີ່ປະເທດຈີນ ເພິ່ນໄດ້ມີການສຳຫລວດ ເພື່ອຊອກຫາຈຳນວນເດັກຫູໜວກ ທີ່ສາມາດເຂົ້າໂຮງຮຽນ ເດັກຫູໜວກ. ຈາກການສຳຫລວດພົບວ່າ ມີສອງຄອບຄົວທີ່ຢູ່ໃກ້ກັນມີລູກຫູໜວກ ແຕ່ພວກເພິ່ນບໍ່ຮູ້ກັນມາກ່ອນ ເພາະວ່າ ຜ່ານມາຍັງບໍ່ເຄີຍໄດ້ພົບກັນເລີຍ.

ຖ້າພວກທ່ານຫາກອາໄສຢູ່ໃນຕົວເມືອງໃຫຍ່ ທ່ານກໍ່ອາດມີໂອກາດຊອກຫາວິທີພົບກັບຄົນ ຫູໜວກໄດ້. ເຖິງແມ່ນວ່າທ່ານຢູ່ໃນເຂດຊົນນະບົດບ້ານນ້ອຍໆກໍ່ອາດມີທັງຄົນຫູໜວກ ແລະ ຄົນຫູດີ ເຊິ່ງສາມາດຕິດຕໍ່ກັນດ້ວຍພາສາສັນຍານ ຫລື ພາສາ ທ່າທາງ ແລະ ພວກເຂົາກໍ່ຈະຍິນດີທີ່ຈະຊ່ວຍຄອບຄົວ ທີ່ມີລູກຫູໜວກໄດ້.

ບັນດາຊຸມຊົນທີ່ໃຫຍ່ຈະມີສະໂມສອນທາງ ສັງຄົມ, ສະມາຄົມ ຫລື ກຸ່ມຄົນໃນສັງຄົມ ເຊິ່ງມີທັງກຸ່ມ ຄົນຫູໜວກ. ບາງຄັ້ງ ບັນດາສະມາຄົມເຫລົ່ານີ້ ມີໂຄງການສຳລັບເດັກຫູໜວກ ແລະ ຄອບຄົວຂອງພວກເຂົາ ເຊິ່ງສະມາຄົມເຫລົ່ານີ້ຈະຍິນດີ ຕ້ອນຮັບລູກ ແລະ ຄອບຄົວເຂົ້າຮ່ວມຢ່າງຈິງໃຈ.




*ຄົນພິການຫູເປັນຜູ້ຊ່ວຍທີ່ດີທີ່ສຸດ ສຳລັບ ການສອນໃຫ້ຄອບຄົວທີ່ມີຄົນພິການຫູ.*

ໃນແຕ່ລະປີມູນນິທິ ເດັນຣີ ສຳລັບແມ່ຍິງ ໄດ້ຈັດຕັ້ງການແຂ່ງຂັນເດັກຫູໜວກທີ່ມີ ພອນສະຫວັນ. ພາຍຫລັງການແຂ່ງຂັນ ຄອບຄົວ ກໍມາພົບກັນເພື່ອປຶກສາຫາລື ກ່ຽວກັບບັນຫາຫູໜວກ ຊຶ່ງເປັນໂຄງການໜຶ່ງຂອງມູນນິທິທີ່ມີຊື່ວ່າ: ຕາມທັນເດັກ ແຕ່ຍັງໜຸ່ມ: ທັງນີ້ເພື່ອນຳເອົາຄອບຄົວ ມີເດັກຫູໜວກມາຮ່ວມກິດຈະກຳນຳກັນ.



# ຊ່ວຍເດັກຫູໜວກໃຫ້ໄດ້ຮັບການສຶກສາ ແລະ ການຝຶກອົບຮົມ

ຫຼາຍຄອບຄົວໄດ້ບຸກບືນໃນການໃຫ້ໂອກາດເດັກທີ່ຫູໜວກໄດ້ເຂົ້າໂຮງຮຽນ ແຕ່ມັນກໍ່ຮຽກຮ້ອງທັງເວລາ, ພະລັງງານ ແລະ ຊັບສິນ ເພື່ອຈັດຕັ້ງໃຫ້ເດັກທີ່ຫູໜວກໄດ້ມີໂອກາດໄດ້ຮໍ່າຮຽນ. ຖ້າວ່າທັງຊຸມຊົນຫາກພ້ອມພຽງກັນປະຕິບັດສິດທິທາງການສຶກສາສໍາລັບເດັກຫູໜວກ ຈະພາໃຫ້ມີການປ່ຽນແປງໃຫຍ່ໄດ້.

ບັນດາຊຸມຊົນທີ່ມີຄວາມສົນໃຈໃນການຈັດຕັ້ງການສຶກສາ ແລະ ການຝຶກອົບຮົມທີ່ດີກວ່າ ສໍາລັບເດັກຫູໜວກ ຈະຕ້ອງໄດ້ພົວພັນກັບອົງການຈັດຕັ້ງທ້ອງຖິ່ນແຫ່ງຊາດ ສໍາລັບເດັກຫູໜວກ ແລະ ກະຊວງສຶກສາທິການ ຊຶ່ງການພົວພັນນີ້ ຈະຊ່ວຍໃຫ້ພວກເພິ່ນຮູ້ກ່ຽວກັບໂອກາດ ແລະ ກ່ຽວກັບກົດໝາຍໃນການສຶກສາສໍາລັບເດັກຫູໜວກໃນທ້ອງຖິ່ນ. ກົດໝາຍໃນທຸກປະເທດໄດ້ມີການອູ້ມຊູ ສິດທິຂອງບັນດາເດັກທຸກຄົນ ລວມທັງເດັກທີ່ຫູໜວກ ດ້ວຍການສະໜອງ ການສຶກສາພາກລັດ.

ນີ້ແມ່ນວິທີການທີ່ຊຸມຊົນສາມາດຊ່ວຍໂຮງຮຽນສະໜອງຄວາມຕ້ອງການຂອງເດັກທີ່ ຫູໜວກໄດ້ດີດັ່ງ:

- ສະໜອງການຝຶກອົບຮົມໃຫ້ແກ່ຄູສອນເພື່ອໃຫ້ພວກເພິ່ນຕິດຕໍ່ພົວພັນກັບເດັກຫູໜວກໄດ້.
- ເຊີນໃຫ້ຜູ້ໃຫຍ່ທີ່ຫູໜວກເຂົ້າຊ່ວຍເຫຼືອຄູສອນ ຄອບຄົວ ຫຼື ນັກຮຽນໃຫ້ຮຽນພາສາ ສັນຍານ ຫຼື ພວກເຂົາສາມາດເຮັດວຽກໃນຫ້ອງຮຽນແລະເອົາໃຈໃສ່ເດັກທີ່ຫູໜວກເປັນພິເສດ.
- ການສະໜອງການຝຶກອົບຮົມສີມືແຮງງານທີ່ຈະຊ່ວຍໃຫ້ນັກຮຽນມີລາຍຮັບເພີ່ມ.

ການນໍາເອົາບັນດາເດັກທີ່ຫູໜວກເຂົ້າຫາກັນພາຍໃນໂຮງຮຽນ ຫຼື ໃນຫ້ອງຮຽນ ສາມາດສ້າງຊຸມຊົນໃຫ້ເດັກທີ່ເຄີຍປ່ຽວພອຍເຂົ້າຫາກັນ.

## ຈິດສໍານຶກເປັນບາດກ້າວທໍາອິດຕໍ່ການປ່ຽນແປງ

ບັນດາຜູ້ໃຫຍ່ຫູໜວກ, ຜູ້ປົກຄອງ ແລະ ສະມາຊິກຂອງຊຸມຊົນຕ້ອງເຮັດວຽກຮ່ວມກັບພະນັກງານຂອງລັດຖະບານ ເພື່ອໃຫ້ພວກເພິ່ນໄດ້ເຫັນ ຄວາມຕ້ອງການຂອງເດັກຫູໜວກ ແລະ ສິ່ງທີ່ພວກເຂົາສາມາດປະກອບສ່ວນໄດ້. ໃນການເຮັດວຽກຮ່ວມກັນນີ້ພວກເພິ່ນຈະສາມາດກໍາຈັດຂັບໄລ່ຄວາມບໍ່ຮູ້ເທົ່າເຖິງການ ແລະ ຄວາມເລີກລັບກ່ຽວກັບຫູໜວກອອກໄປໄດ້.






## ທຸກຄົນຈະໄດ້ຮັບຜົນປະໂຫຍດໃນຄວາມພະຍາຍາມຕໍ່ການອູ້ມຊູເດັກ ຫູໜວກ

ໝົດທັງຊຸມຊົນຈະມີຄວາມເຂັ້ມແຂງໃນເມື່ອປະຊາຊົນໃນສັງຄົມຫາກເອົາໃຈໃສ່ເຊິ່ງກັນ ແລະ ກັນ ແລະ ມີຄວາມຮັບຜິດຊອບຕໍ່ກັນໃນທຸກດ້ານພ້ອມທັງຮັບຮູ້ຄວາມແຕກຕ່າງທາງຈຸດພິເສດຂອງຄົນ ແລະ ສິ່ງໃດໜຶ່ງທີ່ມີຄວາມຄ້າຍຄືກັນໃນສັງຄົມ. ໃນເມື່ອມີການເອົາໃຈໃສ່ຕໍ່ຄວາມຕ້ອງການພິເສດຂອງເດັກຫູໜວກ ການປັບປຸງສະພາບການໃນຊຸມຊົນກໍຈະດີຂຶ້ນທັງຊຸມຊົນ.

ບັນດາເດັກໃນທົ່ວສັງຄົມສາມາດໄດ້ຮັບຜົນປະໂຫຍດຈາກການໃຫ້ບໍລິການທາງສັງຄົມທີ່ດີ ດັ່ງມີການ ກວດກາການໄດ້ຍິນ ແລະ ອຳນວຍຄວາມສະດວກໃຫ້ ເດັກໄດ້ຮັບການສຶກສາ ແລະ ການຝຶກອົບຮົມສີມືແຮງງານ.

ເມື່ອປະຊາຊົນຮຽນຮູ້ການເຮັດວຽກຮ່ວມກັນ ເພື່ອກ້າວໄປສູ່ ເປົ້າໝາຍຕົ້ນສຳຄັນ ພວກເຂົາກໍສາມາດບັນລຸເປົ້າໝາຍນຳກັນໄດ້ແທນທີ່ຈະເຮັດວຽກແບບກະແຈກກະຈາຍ. ຊຸມຊົນໃດທີ່ຈັດຕັ້ງການແກ້ບັນຫາໃດໜຶ່ງຢ່າງມີຈຸດສຸມ ກໍຈະສາມາດນຳໃຊ້ປະສົບການດັ່ງກ່າວໃນການແກ້ໄຂຄວາມຕ້ອງການ ແລະ ໂຄງການ



ອື່ນໄດ້ດີຄືກັນ.

ເມື່ອພວກຄູສອນຊອກ ຫາວິທີການໃນການຕິດຕໍ່ພົວພັນກັບເດັກ ທີ່ບໍ່ໄດ້ ຍິນດີ ກໍສາມາດຊ່ວຍ ເດັກທຸກຄົນໃຫ້ເຂົ້າໃຈ ບົດຮຽນໄດ້ດີກວ່າເກົ່າ.

ຖ້າຫາກວ່າເດັກທີ່ຫູບໍ່ໄດ້ຍິນດີບໍ່ໄດ້ຮັບການສຶກສາ ແລະການອູ້ມຊູຊ່ວຍເຫຼືອພວກເຂົາອາດບໍ່ຮຽນຮູ້ວິທີການຕິດຕໍ່ພົວພັນກັບຄົນອື່ນໄດ້ ຫຼື ພວກເຂົາຈະບໍ່ສາມາດຮຽນຮູ້ຝີມືແຮງງານ ເພື່ອຈະໃຊ້ໃນການຊອກຢູ່ຫາກິນ ແລະ ດູແລຕົວເອງໄດ້ ແລະຈະບໍ່ຢູ່ຮ່ວມກັບຄົນອື່ນຢ່າງສັນຕິສຸກໄດ້. ຄວາມທຸກ ແລະ ຄວາມຈົນອາດຈະກາຍເປັນພາລະໜັກໃຫ້ແກ່ຄອບຄົວ, ເພື່ອນບ້ານ ແລະ ຊຸມຊົນໄດ້

# ເມືອງທີ່ຮຽນພາສາໃຫມ່

ໃນພາກຕາເວັນອອກສຽງເຫນືອຂອງປະເທດ ເບຣຊິນ ທາງໂບດເພິ່ນໄດ້ເລີ່ມຕັ້ງ ໂຮງຮຽນນ້ອຍໆ ຂຶ້ນແຫ່ງຫນຶ່ງ ສໍາລັບເດັກຫູຫນວກ. ຫລັງຈາກນັ້ນ ບໍ່ດົນ ບັນດາຄອບຄົວທີ່ເຂົ້າຮ່ວມ ກໍໄດ້ພາກັນກໍ່ຕັ້ງສະມາຄົມພໍ່ແມ່ນັກຮຽນ ແລະ ເພື່ອນຄົນຫູຫນວກຂຶ້ນທີ່ເມືອງກາໂບ. ສະມາຄົມນີ້ ໄດ້ຈັດຕັ້ງຫ້ອງຮຽນທີ່ໃຊ້ພາສາສັນຍານ ສໍາລັບຄົນຫູດີ ເພື່ອໃຫ້ພວກເຂົາສາມາດຕິດຕໍ່ພົວພັນກັບເດັກທີ່ຫູຫນວກ. ຈາກນັ້ນ ພວກເຂົາກໍໄດ້ພົວພັນກັບສະມາຄົມຄົນຫູຫນວກຂອງເມືອງທີ່ໃກ້ຄຽງ ພ້ອມກັນນັ້ນ ຍັງ ໄດ້ຈ້າງຄູສອນໄປສອນພາສາສັນຍານ ສະມາຊິກຄອບຄົວຂອງຄົນຫູຫນວກ. ສະມາຄົມພໍ່ ແມ່ຄົນຫູຫນວກ ໄດ້ສະເຫນີໃຫ້ລັດຖະບານ ທ້ອງຖິ່ນ ເປີດໂຮງຮຽນສໍາລັບເດັກທີ່ຫູຫນວກ. ໂຮງຮຽນນີ້ໄດ້ຈ້າງຄູຝຶກອົບຮົມມາເປີດສອນ ໃຫ້ແກ່ເດັກຫູຫນວກ. ຈາກນັ້ນ ເດັກຫູຫນວກກໍສາມາດເຂົ້າຮ່ວມກິດຈະກໍາຕ່າງໆ ກັບເດັກ ຫູດີທີ່ຮຽນໃນໂຮງຮຽນປົກກະຕິ. ອີກບໍ່ດົນ ຫມົດທັງເມືອງກໍເຫັນປ້າຍທີ່ໃຊ້ພາສາສັນຍານ ທົ່ວເມືອງ ບໍ່ວ່າແຕ່ໃນໂຮງຮຽນ ແຕ່ຍັງໃຊ້ຕິດ ຫ້າງຮ້ານຂາຍເຄື່ອງ ແລະ  ປ້າຍຖະໜົນຕ່າງໆ.



*ມີຄົນຈໍານວນຫລາຍຂຶ້ນເລື້ອຍໆ ທີ່ເຂົ້າມານໍາ ໃຊ້ຫ້ອງຮຽນພາສາສັນຍານ ເພື່ອຮູ້ວິທີການຕິດ ຕໍ່ກັບເດັກນ້ອຍ ແລະ ຜູ້ໃຫຍ່ທີ່ຫູຫນວກ ເຊິ່ງອາ ໃສຢູ່ໃນເມືອງ.*

ແຕ່ກ່ອນໃຜໆກໍຄິດວ່າ ພວກຫູຫນວກເປັນຄົນຊ້າທາງມັນສະຫມອງ ແຕ່ມາຮອດ ປະຈຸບັນນີ້ ພວກເຂົາໄດ້ມີ ແນວຄິດທີ່ດີຕໍ່ກັບຄົນຫູຫນວກ. ພວກເຂົາໄດ້ໃຊ້ພາສາສັນຍານ ໃນການບໍລິການໃນໂບດ, ພວກຊາວຫນຸ່ມຫູຫນວກ ກໍໄດ້ມີວຽກເຮັດວງານທໍາໃນສັງຄົມ ແລະ ພວກເດັກຫູຫນວກ ກໍໄດ້ຢູ່ຮ່ວມຮຽນ ແລະ ຮ່ວມຫລີ້ນກັບເດັກຫູດີ ທັງຫລາຍໃນສັງຄົມ.

ສະມາຄົມນີ້ ໄດ້ຊ່ວຍຍົກສູງລະດັບຈິດສໍານຶກຂອງສັງຄົມຕໍ່ກັບຄົນຫູຫນວກໃນສັງຄົມ. ພວກເຂົາໄດ້ຈັດຕັ້ງການສໍາມະນາ ແລະ ກອງປະຊຸມປະຈໍາເດືອນ ເພື່ອເຮັດໃຫ້ພໍ່ແມ່ຂອງເດັກ ສາມາດໄດ້ຮັບການອູ້ມຊູຊ່ວຍເຫຼືອຈາກພໍ່ແມ່ຂອງເດັກທົ່ວໄປ ແລະ ໄດ້ຮຽນຮູ້ກັບການໃຊ້ພາສາສັນຍານກັບລູກໆໄດ້. ນອກຈາກນີ້ ສະມາຄົມຍັງໄດ້ຈັດພິມວັດຈະນານຸກົມພາສາສັນຍານແບບງ່າຍໆ ຊຶ່ງມີສັນຍະລັກຢູ່ 500 ແບບ ຊຶ່ງຄົນໃນສັງຄົມສາມາດໃຊ້ໄດ້.

ດ້ວຍການເຮັດວຽກຮ່ວມກັນແບບນີ້ ພວກເຂົາໄດ້ສ້າງສັງຄົມທີ່ສາມາດຊ່ວຍເຫລືອ ເດັກທຸກຄົນໄດ້ ແລະ ພັດທະນາຂີດຄວາມສາມາດຂອງສັງຄົມໃຫ້ເຕັມຄວາມສາມາດໄດ້.